ມາດຕະຖານແຫ່ງຊາດ ສຳລັບການແກ້ໄຂບັນຫາລະເບີດບໍ່ທັນແຕກ

ທີ່ຕົກຄ້າງຢູ່ ສປປ ລາວ

# ບົດທີ 11

# ລະບຽບການມອບຮັບເນື້ອທີ່ດິນທີ່ອະນຸຍາດ

# ໃຫ້ນຳໃຊ້

ຄະນະກຳມະການຄຸ້ມຄອງແຫ່ງຊາດ (ຄຊກລ) ກ່ຽວກັບ
ການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປລາວ

15 ຕຸລາ 2012

## ສາລະບານ

ສາລະບານ ........................................................................................................2

ບັນທຶກການດັດແກ້ ........................................................................................................3

ລະບຽບການມອບຮັບເນື້ອທີ່ດິນທີ່ອະນຸຍາດໃຫ້ນໍາໃຊ້........................................................................................................4

1. ບົດນໍາ ........................................................................................................4

2. ຂອບເຂດ ........................................................................................................4

3. ຄໍານິຍາມ "ເນື້ອທີ່ດິນທີ່ອະນຸຍາດໃຫ້ນໍາໃຊ້" ........................................................................................................4

3.1. ພື້ນທີ່ດິນທີ່ໄດ້ສໍາຫຼວດແລ້ວ ແຕ່ບໍ່ໄດ້ຮັບອະນຸຍາດໃຫ້ນໍາໃຊ້ ........................................................................................................4

4. ການອະນຸຍາດໃຫ້ນໍາໃຊ້ພື້ນທີ່ດິນ........................................................................................................5

5. ຄວາມຮັບຜິດຊອບຕໍ່ຈາກສິ່ງເສດເຫຼືອ ........................................................................................................5

5.1. ສິດຂອງ ຄຊກລ ໃນການພິຈາລະນາຕັດສິນບັນຫາຄວາມຜິດຊອບຕໍ່ສິ່ງເສດເຫຼືອ........................................................................................................5

5.2. ການກໍານົດຄວາມຮັບຜິດຊອບຈາກສິ່ງເສດເຫຼືອ ........................................................................................................6

6. ລະບຽບການມອບ-ຮັບເນື້ອທີ່ດິນທີ່ອະນຸຍາດໃຫ້ນໍາໃຊ້ ........................................................................................................6

6.1. ເນື້ອທີ່ດິນທີ່ຈະຖືກມອບ-ຮັບ ........................................................................................................6

6.2. ຂໍ້ກໍານົດເບື້ອງຕົ້ນກ່ອນການມອບ-ຮັບເນື້ອທີ່ດິນ........................................................................................................7

6.3. ການມອບ-ຮັບຢູ່ສະໜາມ ........................................................................................................7

7. ໜັງສືຢັ້ງຢືນການມອບ-ຮັບ ........................................................................................................8

7.1. ພະນັກງານຜູ້ທີ່ຈະເຂົ້າຮ່ວມພິທີມອບ-ຮັບຢູ່ເນື້ອທີ່ໆເກັບກູ້ລະເບີດແລ້ວ ........................................................................................................9

7.2. ຂໍ້ມູນກ່ຽວກັບໜ້າວຽກ........................................................................................................9

7.3. ຂໍ້ມູນການປະຕິບັດງານເກັບກູ້ ........................................................................................................9

7.4. ຄວາມສ່ຽງສະເພາະຈາກສິ່ງເສດເຫຼືອ........................................................................................................9

7.5. ຂອບເຂດຈໍາກັດໃນການນໍາໃຊ້ເນື້ອທີ່ດິນ........................................................................................................9

7.6. ຄໍາຢືນຢັນຢ່າງເປັນທາງການ ........................................................................................................10

7.7. ການຮັບຮູ້ຂອງເຈົ້າຂອງດິນ, ຜູ້ນໍາໃຊ້ດິນ ແລະ ອໍານາດການປົກຄອງກ່ຽວຂ້ອງ........................................................................................................10

8. ການລາຍງານ ........................................................................................................10

9. ການມອບ-ຮັບພື້ນທີ່ດິນທີ່ໄດ້ໃຊ້ເປັນສະຖານທີ່ທໍາລາຍລະເບີດຈໍານວນຫຼາຍ........................................................................................................11

# ບັນທຶກການດັດແກ້

## ການຄຸ້ມຄອງການດັດແກ້ມາດຕະຖາແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດແຫ່ງ ສປປ ລາວ

ມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກຕົກຄ້າງຈະມີການທົບທວນຄືນເປັນທາງການ 3 ປີຕໍ່ຄັ້ງ. ຖ້າຫາກມີຄວາມຈຳເປັນກໍ່ສາມາດທົບທວນກ່ອນກຳນົດໄດ້ເປັນຕົ້ນແມ່ນບັນຫາກ່ຽວກັບຄວາມປອດໄພ ແລະ ປະສິດທິພາບຂອງການປະຕິບັດງານ ຫຼື ສຳລັບຈຸດປະສົງເພື່ອດັດແກ້ໃຫ້ແທດເໝາະກັບສະພາບການຕົວຈິງໃນປະຈຸບັນ. ຖ້າມີການດັດແກ້ແມ່ນໃຫ້ໃສ່ ເລກທີ, ວັນທີ ແລະ ລາຍລະອຽດຂອງການດັດແກ້ໃສໃນຕາຕະລາງ ທີ່ກຳນົດຢູ່ລຸ່ມນີ້.

ເມື່ອສຳເລັດການທົບທວນມາດຕະຖານແຫ່ງຊາດ ກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກຕົກຄ້າງຢ່າງເປັນທາງການແລ້ວກໍ່ຈະໄດ້ເຜີຍແຜ່ໃຫ້ນຳໃຊ້. ຂໍ້ດັດແກ້ຕ່າງໆທີ່ມີຢູ່ໃສະບັບດັດແກ້ກ່ອນໜ້ານັ້ນຈະຕ້ອງໄດ້ລວມເຂົ້າໄວ້ໃນສະບັບດັດແກ້ໃໝ່ເລີ່ຍ ແລະ ໃຫ້ລືບອອກຈາກຕາຕະລາງບັນທຶກການດັດແກ້. ຈາກນັ້ນກໍໃຫ້ເລີ່ມຕັ້ງຕົ້ນບັນທຶກ ການດັດແກ້ໃໝ່ຈົນກວ່າຈະມີການທົບທວນຄືນໃນຄັ້ງຕໍ່ໄປອີກ.

| ເລກທີ | ວັນທີ | ລາຍລະອຽດການດັດແກ້ |
|---|---|---|
| 1 | 30 ມິຖຸນາ 11 | ຂໍ້ 1, ປ່ຽນຄຳສັບໃນວັກທີສອງ.<br>ຂໍ້ 5.1, ປ່ຽນຄຳສັບໃນວັກທີໜຶ່ງ ແລະ ວັກທີສອງ.<br>ຂໍ້ 5.2, ປ່ຽນຄຳສັບໃນວັກທີສອງ.<br>ຂໍ້ 6.3, ເພີ່ມວັກຍ່ອຍໃໝ່, ວັກຍ່ອຍທີສອງມີການປ່ຽນແປງຈຸດນ້ອຍໆ.<br>ຂໍ້ 8, ເພີ່ມວັກຍ່ອຍໃໝ່ ຂໍ້ ຂໍ. |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |

# ລະບຽບການມອບຮັບເນື້ອທີ່ດິນທີ່ອະນຸຍາດໃຫ້ນໍາໃຊ້

## 1. ບົດນໍາ

ເມື່ອພື້ນທີ່ດິນໄດ້ຜ່ານຂັ້ນຕອນການຈັດຕັ້ງປະຕິບັດການເກັບກູ້ ລບຕ ແລ້ວ ຄວນມີການມອບ-ຮັບໃຫ້ນໍາໃຊ້ໂດຍໄວ. ກ່ອນພື້ນທີ່ດິນຈະຖືກມອບ-ຮັບໃຫ້ນໍາໃຊ້ ມີບາງວຽກງານສໍາຄັນທີ່ຈະຕ້ອງປະຕິບັດໃຫ້ສໍາເລັດ ເຊັ່ນ: ການປັກໝາຍເຂດແດນ, ການສໍາຫຼວດ ແລະ ບັນທຶກຢ່າງລະອຽດ, ທຸກຂໍ້ມູນກ່ຽວກັບໜ້າວຽກຈະຕ້ອງກວດສອບ ແລະ ຮຽບຮຽງຄັກແນ່ ແລ້ວສົ່ງໃຫ້ ຄຊກລ, ພ້ອມນັ້ນກໍ່ໃຫ້ມອບ-ຮັບເນື້ອທີ່ດິນຢ່າງເປັນທາງການໃຫ້ເຈົ້າຂອງດິນ, ຜູ້ນໍາໃຊ້ດິນ ຫຼື ອໍານາດການປົກຄອງທີ່ກ່ຽວຂ້ອງ.

ຄຊກລ ໃນຖານະທີ່ເປັນອົງການຄຸ້ມຄອງ ແລະ ອອກຂໍ້ກໍານົດສໍາລັບການປະຕິບັດງານດ້ານລະເບີດບໍ່ທັນແຕກ ຢູ່ ສປປ ລາວ ມີຄວາມຮັບຜິດຊອບໃນການກໍານົດລາຍລະອຽດ ໃນການມອບຮັບເນື້ອທີ່ດິນທີ່ອະນຸຍາດໃຫ້ນໍາໃຊ້ ຈາກປະຕິບັດການເກັບກູ້ ລບຕ ຢູ່ ສປປ ລາວ ແລະ ຮັບປະກັນໃຫ້ບັນດາອົງການເກັບກູ້ປະຕິບັດສອດຄ່ອງກັບຂໍ້ກໍານົດເຫຼົ່ານີ້.

## 2. ຂອບເຂດ

ມາດຕະຖານແຫ່ງຊາດບົດນີ້ ໄດ້ລະບຸຂໍ້ກໍານົດ ແລະ ລະບຽບການ ໃນການອະນຸຍາດໃຫ້ນໍາໃຊ້ເນື້ອທີ່ດິນພາຍຫຼັງການເກັບກູ້ ລບຕ ຢູ່ ສປປ ລາວ.

ຂໍ້ກໍານົດເພີ່ມຕື່ມຕ່າງໆ ສໍາລັບເນື້ອທີ່ດິນທີ່ອະນຸຍາດໃຫ້ນໍາໃຊ້ພາຍຫຼັງການເກັບກູ້ກັບລະເບີດຝັງດິນ ໄດ້ກໍານົດໄວ້ໃນ **ບົດທີ 12 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ "ການເກັບກູ້ກັບລະເບີດຝັງດິນ".**

## 3. ຄໍານິຍາມ "ເນື້ອທີ່ດິນທີ່ອະນຸຍາດໃຫ້ນໍາໃຊ້"

ເນື້ອທີ່ດິນທີ່ອະນຸຍາດໃຫ້ນໍາໃຊ້ ແມ່ນເນື້ອທີ່ດິນທີ່ໄດ້ກໍານົດສໍາລັບການເກັບກູ້, ຊຶ່ງຕ້ອງມີການສໍາຫຼວດ ຫຼື ເກັບ ກູ້ ໂດຍສອດຄ່ອງກັບບົດກ່ຽວຂ້ອງຂອງ ມາດຕະຖານແຫ່ງຊາດ ແລະ ອະນຸຍາດໃຫ້ເຈົ້າຂອງດິນ, ຜູ້ນໍາໃຊ້ ດິນ ຫຼື ອໍານາດການປົກຄອງກ່ຽວຂ້ອງ ເພື່ອນໍາໃຊ້ຕາມຈຸດປະສົງຕໍ່ໄປ. ພື້ນທີ່ດິນທີ່ອະນຸຍາດໃຫ້ນໍາໃຊ້ບໍ່ຈໍາເປັນຕ້ອງເປັນພື້ນທີ່ດິນ ທີ່ໄດ້ຮັບການເກັບກູ້ສະເໝີໄປ.

ພື້ນທີ່ດິນທີ່ຈັດປະເພດເປັນ "ເນື້ອທີ່ດິນທີ່ອະນຸຍາດໃຫ້ນໍາໃຊ້", ເນື້ອທີ່ດິນດັ່ງກ່າວຈະຕ້ອງໄດ້ມອບ-ຮັບຢ່າງເປັນທາງການຕາມລະບຽບການທີ່ກໍານົດໄວ້ໃນບົດນີ້ຂອງມາດຕະຖານແຫ່ງຊາດ.

### 3.1. ພື້ນທີ່ດິນທີ່ໄດ້ສໍາຫຼວດແລ້ວ ແຕ່ບໍ່ໄດ້ຮັບອະນຸຍາດໃຫ້ນໍາໃຊ້

ໃນບາງກໍລະນີ ເນື້ອທີ່ດິນອາດໄດ້ສໍາຫຼວດ ແລະ ກໍານົດວ່າຕ້ອງການໃຫ້ປະຕິບັດການເກັບກູ້ລະເບີດ, ແຕ່ບໍ່ໄດ້ກໍານົດໄວ້ໃນແຜນວຽກງານໃນປັດຈຸບັນ.ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມເນື້ອທີ່ດິນດັ່ງກ່າວຄວນປະເມີນວ່າບໍ່ມີຄວາມປອດໄພໃນການນໍາໃຊ ແລະ ບໍ່ຄວນອະນຸຍາດໃຫ້ນໍາໃຊ້.

ກໍລະນີດັ່ງກ່າວ ອາດມີຄວາມເປັນໄປໄດ້ທີ່ເຈົ້າຂອງດິນ, ຜູ້ນຳໃຊ້ດິນ ຫຼື ອຳນາດການປົກຄອງກ່ຽວຂ້ອງ ຈະເຂົ້າໃຈຜິດໄປວ່າ ຍ້ອນມີບາງວຽກງານໄດ້ປະຕິບັດໃນພື້ນທີ່ດິນຕອນນັ້ນແລ້ວ ສະນັ້ນ ພື້ນທີ່ດິນດັ່ງກ່າວຈຶ່ງມີຄວາມປອດໄພໃນການນຳໃຊ້. ເພື່ອຫຼີກເວັ້ນບໍ່ໃຫ້ເຫດການຄືດັ່ງກ່າວເກີດຂຶ້ນ ອົງການເກັບກູ້ລະເບີດທີ່ໄດ້ເຮັດການສຳຫຼວດພື້ນທີ່ນັ້ນ ແຕ່ບໍ່ໄດ້ເອົາພື້ນທີ່ດິນດັ່ງກ່າວເຂົ້າໃນແຜນປະຕິບັດງານ ແລະ ກໍຍັງບໍ່ໄດ້ອະນຸຍາດໃຫ້ນຳໃຊ້ຈະຕ້ອງຮັບປະກັນໃຫ້ເຈົ້າຂອງດິນ, ຜູ້ນຳໃຊ້ດິນ ຫຼື ອຳນາດການປົກຄອງທ້ອງຖິ່ນກ່ຽວຂ້ອງ ໄດ້ຮັບແຈ້ງກ່ຽວກັບເຫດຜົນທີ່ພື້ນທີ່ດິນດັ່ງກ່າວບໍ່ໄດ້ປະຕິບັດການເກັບກູ້ ແລະ ບໍ່ຄວນປະປ່ອຍໃຫ້ເກີດຄວາມເຂົ້າໃຈຜິດວ່າ ພື້ນທີ່ດິນນັ້ນມີຄວາມປອດໄພສາມາດນຳໃຊ້ໄດ້.

## 4. ການອະນຸຍາດໃຫ້ນຳໃຊ້ພື້ນທີ່ດິນ

ອົງການເກັບກູ້ລະເບີດອາດຈະອະນຸຍາດໃຫ້ນຳໃຊ້ເນື້ອທີ່ດິນທີ່ໄດ້ສະເໜີໃຫ້ເກັບກູ້, ເມື່ອດິນຕອນດັ່ງກ່າວໄດ້ປະຕິບັດການເກັບກູ້ລະເບີດບໍ່ທັນແຕກ ຫຼື ສຳຫຼວດ ໂດຍສອດຄ່ອງກັບມາດຕະຖານ ແລະ ລະບຽບການທີ່ກຳນົດໄວ້ໃນມາດຕະຖານແຫ່ງຊາດເທົ່ານັ້ນ.

ເນື້ອທີ່ດິນ ທີ່ອະນຸຍາດໃຫ້ນຳໃຊ້ຕາມປົກກະຕິແລ້ວ ຕ້ອງໄດ້ຜ່ານການສຳຫຼວດຜົນສຳເລັດຂັ້ນສຸດທ້າຍ ແລະ ຂຽນຂໍ້ມູນປະກອບໃສ່ຮ່າງ **"ບົດລາຍງານການສຳຫຼວດຜົນສຳເລັດການເກັບກູ້"** ໃຫ້ຄົບຖ້ວນ ແລະ ປະກອບລວມເຂົ້າກັບເອກະສານອື່ນໆທີ່ກ່ຽວຂ້ອງ ແລ້ວສົ່ງໃຫ້ ຄຊກລ. ພື້ນທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ຕ້ອງມີໃບຢັ້ງຢືນການມອບຮັບ ທີ່ໄດ້ເຮັດສຳເລັດແລ້ວ ໂດຍໃຫ້ຄ່ອງກັບຂໍ້ກຳນົດຂອງມາດຕະຖານແຫ່ງຊາດບົດນີ້.

## 5. ຄວາມຮັບຜິດຊອບຕໍ່ຈາກສິ່ງເສດເຫຼືອ

ຄວາມຮັບຜິດຊອບຕໍ່ຈາກສິ່ງເສດເຫຼືອທີ່ກ່ຽວຂ້ອງກັບອົງການເກັບກູ້ລະເບີດ ຖ້າມີເຫດການຈາກລບຕເກີດຂຶ້ນໃນເນື້ອທີ່ດິນທີ່ອົງການເກັບກູ້ລະເບີດໄດ້ອະນຸຍາດນຳໃຊ້. ຈຸດປະສົງຂອງມາດຕະຖານແຫ່ງຊາດ "ເຫດການ" ແມ່ນ "ກໍລະນີທີ່ກໍ່ໃຫ້ເກີດອຸປະຕິເຫດຫຼືມີຄວາມອາດສາມາດທີ່ຈະນຳໄປສູ່ການເກີດອຸປະຕິເຫດ"[1] ຖ້າບໍ່ມີເຫດການອຸບັດຕິເຫດກໍຈະບໍ່ສາມາດເກີດຂຶ້ນໄດ້.

ກ່ອນທີ່ຈະສາມາດແບ່ງປັນຄວາມຮັບຜິດຊອບໃດໆ ເນື້ອທີ່ດິນຕ້ອງໄດ້ຮັບການມອບຢ່າງເປັນທາງການຈາກອົງການເກັບກູ້ລະເບີດ ໂດຍໃຫ້ສອດຄ່ອງກັບຂໍ້ກຳນົດຕ່າງໆໃນບົດນີ້ຂອງມາດຕະຖານແຫ່ງຊາດ.

### 5.1. ສິດຂອງ ຄຊກລ ໃນການພິຈາລະນາຕັດສິນບັນຫາຄວາມຜິດຊອບຕໍ່ສິ່ງເສດເຫຼືອ.

ຄຊກລ ໃນຖານະທີ່ເປັນອົງການທີ່ຄຸ້ມຄອງ ແລະ ອອກຂໍ້ກຳນົດສຳລັບການປະຕິບັດງານດ້ານລະເບີດບໍ່ທັນແຕກຢູ່ ສປປ ລາວ ຊຶ່ງກຳນົດໄວ້ໃນ ມາດຕາ 2 ແລະ 3 ຂອງດຳລັດນາຍົກລັດຖະມົນຕີແຫ່ງ ສປປ ລາວ ສະບັບເລກທີ 33/ນຍ ລົງວັນທີ 17 ມີນາ 2004 ວ່າດ້ວຍ ການສ້າງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງແຫ່ງ ສປປ ລາວ.

ດຳລັດສະບັບນີ້ໃຫ້ສິດແກ່ ຄຊກລ ໃນການອອກຂໍ້ກຳນົດສຳລັບອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ແລະກິດຈະກຳກ່ຽວຂ້ອງຕ່າງໆ. ຕາມຄວາມໝາຍຂອງດຳລັດສະບັບນີ້, ຄຊກລ ມີຄວາມຮັບຜິດຊອບໃນການກຳນົດໃຫ້ດຳເນີນການເກັບກູ້ລະເບີດຄືນຖ້າໃນເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ ແຕ່ບໍ່ບັນລຸໄດ້ຕາມຄຸນນະພາບທີ່ກຳນົດໄວ້.

1. ຄຳນິຍາມຈາກມາດຕະຖານການເກັບກູ້ສາກົນ, ໝວດທີ 04.10.

ດຳລັດສະບັບນີ້ບໍ່ໄດ້ໃຫ້ສິດອຳນາດແກ່ ຄຊກລ ເພື່ອຮັບຜິດຊອບຕໍ່ສິ່ງເສດເຫຼືອໃດໜຶ່ງຈາກການປະຕິບັດງານເກັບກູ້ລະເບີດບໍ່ທັນແຕກລວມທັງຄວາມຮັບຜິດຊອບໃນການຊົດເຊີຍການບາດເຈັບຂອງບຸກຄົນ ຫຼື ຄວາມເສຍຫາຍຕໍ່ຊັບສິນທີ່ອາດຈະເກີດຂຶ້ນອັນເນື່ອງມາຈາກການເກັບກູ້ລະເບີດທີ່ປະຕິບັດບໍ່ໄດ້ຕາມມາດຕະຖານຂອງການເກັບກູ້ທີ່ກຳນົດໄວ້.

## 5.2. ການກຳນົດຄວາມຮັບຜິດຊອບຈາກສິ່ງເສດເຫຼືອ

ສຳລັບ ສປປ ລາວ, ອົງການເກັບກູ້ລະເບີດຈະບໍ່ໄດ້ຮັບຜິດຊອບຕໍ່ເຫດການເກີດຂຶ້ນ ຈົ້ນກວ່າຈະມີການສືບສວນຢ່າງເປັນທາງການໂດຍສອດຄ່ອງກັບ **ບົດທີ 23 ຂອງ ມາດຕະຖານແຫ່ງຊາດ ວ່າດ້ວຍ "ການລາຍງານ ແລະ ການສືບສວນເຫດການຈາກການເກັບກູ້ລະເບີດ"** ແລະ ການສືບສວນລົງຄວາມເຫັນລະບຸ ແຈ້ງວ່າ ຄຸນນະພາບຂອງການເກັບກູ້ບໍ່ບັນລຸຕາມຄວາມຕ້ອງການທີ່ກຳນົດໄວ້.

ແຕ່ຄວາມຮັບຜິດຊອບອື່ນຈະພິຈາລະນາຕາມຂະບວນການຂອງກົດໝາຍ ໂດຍສອດຄ່ອງກັບລະບົບກົດໝາຍແຫ່ງ ສປປ ລາວ ທີ່ມີຜົນບັງຄັບໃຊ້ຢູ່.

ສຳລັບການເກັບກູ້ລະເບີດທີ່ປະຕິບັດພາຍໃຕ້ສັນຍາ ຫຼື ຂໍ້ຕົກລົງທາງການໃດໜຶ່ງ ລະດັບຂອງຄວາມຮັບຜິດຊອບຈາກຊິ້ນ ສ່ວນສິ່ງເສດເຫຼືອຄວນລະບຸໄວ້ໃນສັນຍາ ຫຼື ຂໍ້ຕົກລົງດວ້ຍ.

ເມື່ອການສືບສວນຢ່າງເປັນທາງການໄດ້ພິສູດ ແລະ ກຳນົດວ່າ ອົງການເກັບກູ້ລະເບີດບໍ່ທັນແຕກ ປະຕິບັດບໍ່ໄດ້ຕາມຄຸນນະພາບຂອງການເກັບກູ້ທີ່ກຳນົດໄວ້, ຫຼື ໃນກໍລະນີເນື້ອທີ່ດິນຕອນດັ່ງກ່າວຖືກມອບຜ່ານການສຳຫຼວດຢູ່, ຫຼືຍັງຢູ່ໃນຂັ້ນຕອນການຢື່ນໜັງສືຂໍຊີແຈງນັ້ນ, ໂດຍປະຕິບັດຕາມຂໍ້ກຳນົດຂອງມາດຕະຖານແຫ່ງຊາດ ຄຊກລ ອາດ ຈະດຳເນີນການກວດກາຄຸນນະພາບພາຍນອກ ຕໍ່ອົງການເກັບກູ້ລະເບີດກ່ຽວຂ້ອງ ແລະ ຖ້າຈຳເປັນກໍອາດຈະໂຈະ ໜັງສື ຢັ້ງຢືນຮັບຮອງຂອງອົງການດັ່ງກ່າວຈົນກວ່າຂໍ້ຂາດຕົກບົກພ່ອງຈະໄດ້ຮັບການແກ້ໄຂໃຫ້ຖືກຕ້ອງ.

## 6. ລະບຽບການມອບ-ຮັບເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້

## 6.1. ເນື້ອທີ່ດິນທີ່ຈະຖືກມອບ-ຮັບ

ປະເພດເນື້ອທີ່ດິນຕໍ່ໄປນີ້ ຈະໄດ້ຈັດໃຫ້ມີການມອບ-ຮັບຢ່າງເປັນທາງການຕາມຂໍ້ກຳນົດທີ່ລະບຸໄວ້ໃນບົດນີ້ຂອງມາດຕະຖານແຫ່ງຊາດ:

ກ. ເນື້ອທີ່ດິນທຸກແຫ່ງທີ່ໄດ້ເກັບກູ້ຕາມລະບົບ ໂດຍອົງການເກັບກູ້ລະເບີດບໍ່ທັນແຕກ ບໍ່ວ່າຈະເກັບກູ້ຕາມຄວາມຕ້ອງການຂອງການເກັບກູ້ທີ່ກຳນົດສະເພາະ ຫຼື ຕາມຈຸດປະສົງຂອງການນຳໃຊ້ດິນກໍ່ຕາມ.

ຂ. ທຸກເນື້ອທີ່ດິນທີ່ໄດ້ເຮັດການສຳຫຼວດ ສອດຄ່ອງກັບຂໍ້ກຳນົດຄວາມຕ້ອງການຂອງ **ບົດທີ 6 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ "ການສຳຫຼວດ"** ແລະ ໄດ້ບົ່ງບອກວ່າ "ບໍ່ຕ້ອງການໃຫ້ເກັບກູ້" ກ່ອນເນື້ອທີ່ດິນຈະສາມາດນຳໃຊ້ໄດ້ຕາມຈຸດປະສົງ.

ບໍລິເວນພື້ນທີ່ດິນໃດໜຶ່ງທີ່ໄດ້ສະເໜີໃຫ້ເກັບກູ້ ອາດມີບາງສ່ວນສາມາດອະນຸຍາດໃຫ້ນຳໃຊ້ໂດຍຜ່ານການສຳຫຼວດ ແລະ ບາງສ່ວນອະນຸຍາດໃຫ້ນຳໃຊ້ພາຍຫຼັງປະຕິບັດການເກັບກູ້ສຳເລັດ. ການອະນຸຍາດໃຫ້ນຳໃຊ້ເນື້ອທີ່ດິນເປັນແຕ່ລະຕອນອາດບໍ່ສາມາດປະຕິບັດໄດ້ໃນເວລາດຽວກັນ. ໃນກໍລະນີດັ່ງກ່າວການ ມອບ-ຮັບ ເນື້ອທີ່ດິນອາດຈະປະຕິບັດແຍກກັນຄືນລະເທື່ອກໍໄດ້ອີງຕາມຄວາມເໝາະສົມ.

## 6.2. ຂໍ້ກຳນົດເບື້ອງຕົ້ນກ່ອນການມອບ-ຮັບເນື້ອທີ່ດິນ

ມາດຕະການທີ່ຈະປະຕິບັດໃນເບື້ອງຕົ້ນ ກ່ອນຈະມີການມອບ-ຮັບເນື້ອທີ່ດິນມີດັ່ງນີ້:

ກ. ເຂດແດນຂອງເນື້ອທີ່ດິນໄດ້ເກັບກູ້ລະເບີດ ແລະ ເຂດແດນຂອງເນື້ອທີ່ດິນທີ່ຍັງມີລະເບີດຕົກຄ້າງ ພາຍໃນພື້ນທີ່ເກັບກູ້ທີ່ບໍ່ສາມາດອະນຸຍາດໃຫ້ນຳໃຊ້ໄດ້ ຈະຕ້ອງໝາຍເຂດແດນໄວ້ ແລະ ການປັກຫຼັກໝາຍເຂດແດນ ກໍໃຫ້ເຊື່ອມຕໍ່ກັບຈຸດອ້າງອີງຖາວອນ ແລະ ຈຸດມາດຕະຖານ. ທຸກການປັກຫຼັກໝາຍເຂດແດນຈະຕ້ອງປະຕິບັດໃຫ້ສອດຄ່ອງກັບ **ບົດທີ 4 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ "ລະບົບການປັກໝາຍ".**

ຂ. ການສຳຫຼວດຜົນສຳເລັດຂັ້ນສຸດທ້າຍຂອງການເກັບກູ້ຈະດຳເນີນ ໂດຍອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ແລະ ປະກອບຂໍ້ມູນໃສ່ **"ບົດລາຍງານການສຳຫຼວດຜົນສຳເລັດການເກັບກູ້"**, ລວມທັງແຜນວາດລະອຽດຂອງສະໜາມ. ການສຳຫຼວດຜົນສຳເລັດການເກັບກູ້ຕ້ອງປະຕິບັດສອດຄ່ອງກັບ **ບົດທີ 6 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ "ການສຳຫຼວດ"**

ຄ. ໜັງສືຢັ້ງຢືນການມອບ-ຮັບ ຈະຕ້ອງກະກຽມໂດຍອົງການເກັບກູ້ລະເບີດທີ່ກ່ຽວຂ້ອງ. ລາຍລະອຽດສິ່ງທີ່ຕ້ອງກຳນົດໃນໜັງສືຢັ້ງຢືນການມອບ-ຮັບ ໄດ້ກຳນົດໄວ້ໃນຂໍ້ທີ 7 ຂ້າງລຸ່ມນີ້. ໃນໜັງສືຢັ້ງຢືນຈະລວມເອົາທັງລາຍເຊັນ ແລະ ວັນທີ ການກ່າວຢືນຢັນຢ່າງເປັນທາງການໂດຍເຈົ້າໜ້າທີ່ຂອງອົງການເກັບກູ້ລະເບີດ ຕໍ່ກັບຄຸນນະພາບຂອງການເກັບກູ້ທີ່ບັນລຸໄດ້ ເພື່ອອະນຸຍາດໃຫ້ນຳໃຊ້ດິນຕາມຈຸດປະສົງ.

## 6.3. ການມອບ-ຮັບຢູ່ສະໜາມ

ຖ້າເປັນໄປໄດ້ ອົງການເກັບກູ້ລະເບີດຈະຕ້ອງກະກຽມການມອບ-ຮັບເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ຢູ່ສະຖານທີ່ຕົວຈິງ. ການມອບ-ຮັບດີດັ່ງກ່າວຕອ້ງປະຕິບັດໃຫ້ສຳເລັດ ກ່ອນຈະສົ່ງເອກະສານກ່ຽວກັບໜ້າວຽກດັ່ງກ່າວໃຫ້ຄຊກລ. ການມອບ-ຮັບຄວນຈະເຊີນບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງເຂົ້າຮ່ວມ ຊຶ່ງຈະປະກອບດ້ວຍ:

ກ. ຄຊກລ ຂັ້ນແຂວງ/ເມືອງ.

ຂ. ຕົວແທນອຳນາດການປົກຄອງທ້ອງຖິ່ນ ເຊັ່ນ: ນາຍບ້ານ ຫຼື ຕົວແທນອົງການຈັດຕັ້ງຂອງພາກລັດທີ່ກ່ຽວຂ້ອງໃນທ້ອງຖິ່ນ.

ຄ. ເຈົ້າຂອງດິນ, ຜູ້ນຳໃຊ້ດິນ, ຖ້າບໍ່ມີໃຫ້ຖືເອົາຕົວແທນກ່າວຂ້າງເທິງກໍ່ໄດ້.

ງ. ຕົວແທນຈາກອົງການຈັດຕັ້ງທີ່ກ່ຽວຂ້ອງກັບການນຳໃຊ້ເນື້ອທີ່ດິນໃນອະນາຄົດ.

ຈ. ຕົວແທນຂອງອົງການເກັບກູ້, ປົກກະຕິແລ້ວຈະແມ່ນຜູ້ຊີ້ນຳການເກັບກູ້ທີ່ປະຕິບັດໜ້າວຽກດັ່ງກ່າວ.

ການມອບ-ຮັບບໍ່ຄວນໃຫ້ຊັກຊ້າແກ່ຍາວ ຍ້ອນບໍ່ມີໜ້າເຂົ້າຮ່ວມຂອງຜູ້ຮ່ວມງານຜູ້ໃດຜູ້ໜຶ່ງເທົ່ານັ້ນ.

ການປັກໝາຍເຂດແດນຈະຕ້ອງປະຕິບັດໃຫ້ສຳເລັດ ກ່ອນການມອບ-ຮັບພື້ນທີ່ດິນ; ທີ່ອະນຸຍາດໃຫ້ນຳໃຊ້.

ໃນລະຫວ່າງການມອບ-ຮັບຢູ່ສະໜາມ ໃຫ້ກວມເອົາບັນຫາລຸ່ມນີ້ນຳ:

ກ. ເຂດແດນພື້ນທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ ຈະຕ້ອງກຳນົດບັນດາຈຸດລ້ຽວ, ຈຸດລະຫວ່າງທາງທີ່ນຳໃຊ້ໃນສະໜາມ, ຈຸດມາດຕະຖານ ແລະ ຈຸດອ້າງອີງ. ເຈົ້າຂອງດິນ, ຜູ້ນຳໃຊ້ດິນ ແລະ ອຳນາດການປົກຄອງທ້ອງຖິ່ນ ຈະຕ້ອງໄດ້ຮັບການແນະນຳໃຫ້ຮູ້ວິທີດູແລຮັກສາເຄື່ອງໝາຍຂອບເຂດຂອງເນື້ອທີ່ໆເກັບກູ້ ເພື່ອບໍ່ໃຫ້ຖືກທຳລາຍ ແລະ ເຄື່ອນຍ້າຍ.

ຂ. ລາຍລະອຽດການດຳເນີນງານທີ່ໄດ້ປະຕິບັດ ທີ່ຕ້ອງແນະນຳໃຫ້ຊາບມີຄື:

(1) ຖ້າພື້ນທີ່ດິນມີການເກັບກູ້ລະເບີດແລ້ວ ຕ້ອງໄດ້ກຳນົດຄວາມເລິກ ແລະ ຄຸນນະພາບຂອງການເກັບກູ້. ຄຸນນະພາບການເກັບກູ້ຈະຕ້ອງຕິດພັນກັບລະເບີດບໍ່ທັນແຕກທີ່ເປັນເປົ້າໝາຍຕ່ຳສຸດໃນການຄົ້ນຫາ. ຂອບເຂດຈຳກັດໃດໜຶ່ງຕໍ່ກັບການເກັບກູ້ລະເບີດບໍ່ທັນແຕກທີ່ໄດ້ດຳເນີນການຈັດຕັ້ງປະຕິບັດ ຕົວຢ່າງເຊັ່ນ: ຄວາມເລິກຂອງການເກັບກູ້ທີ່ບໍ່ສາມາດບັນລຸໄດ້ຄວາມເລິກທີ່ຕ້ອງການ ຫຼື ພື້ນທີ່ດິນບ່ອນທີ່ບໍ່ສາມາດເກັບກູ້ໄດ້ຢູ່ໃນເນື້ອທີ່ດັ່ງກ່າວ ຈຳເປັນຕ້ອງອະທິບາຍຊີ້ແຈງເຫດຜົນທີ່ພາໃຫ້ການປະຕິບັດບໍ່ໄດ້ຄືດັ່ງກ່າວມາຂ້າງເທິງ.

(2) ຖ້າພື້ນທີ່ດິນໄດ້ຮັບການສຳຫຼວດດ້ານວິຊາການແລ້ວ ແລະ ເຊື່ອວ່າມີຄວາມປອດໄພໃນການນຳໃຊ້ຕາມຈຸດປະສົງ, ຂອບເຂດ ແລະ ລະດັບຂອງການສຳຫຼວດດ້ານວິຊາການຕ້ອງໄດ້ມີການປຶກສາຫາລືກັນ ແລະ ເຫດຜົນຕັດສິນບໍ່ດຳເນີນການເກັບກູ້ຢ່າງເຕັມສ່ວນກໍຕ້ອງໄດ້ອະທິບາຍຊີ້ແຈງພ້ອມ.

ຄ. ອະທິບາຍໃຫ້ຮູ້ເຖິງຄວາມສ່ຽງອັນຕະລາຍ. ບັນຫານີ້ອາດລວມທັງຄວາມເປັນໄປໄດ້ທີ່ຊິ້ນສ່ວນສິ່ງເສດເຫຼືອທີ່ນ້ອຍກວ່າລະເບີດເປົ້າໝາຍຕ່ຳ, ອາດຈະຍັງມີຢູ່ພາຍໃນຄວາມເລິກທີ່ໄດ້ເກັບກູ້. ນອກນັ້ນຍັງມີຄວາມຈຳເປັນຈະຕ້ອງອະທິບາຍໃຫ້ເຈົ້າຂອງ ຫຼື ຜູ້ນຳໃຊ້ດິນຊາບວ່າ ເຂົາເຈົ້າບໍ່ຄວນຂຸດດິນທີ່ເລິກກວ່າລະດັບຄວາມເລິກທີ່ໄດ້ເກັບກູ້ ເພາະຍັງມີຄວາມສ່ຽງຢູ່. ຖ້າຕ້ອງການເກັບກູ້ຕື່ມ; ເລິກກວ່າຄວາມເລິກ ທີ່ກຳນົດໃນເບື້ອງຕົ້ນ ຈະຕ້ອງຂຽນຄຳຮ້ອງສະເໜີໃຫ້ມີ ການເກັບກູ້ຕື່ມອີກ.

ງ. ເຈົ້າຂອງດິນກໍຄືຜູ້ນຳໃຊ້ເນື້ອທີ່ດິນ ຈະຕ້ອງໄດ້ຮັບຄຳແນະນຳວິທີປະຕິບັດກັບ ລບຕ ໃດໜຶ່ງທີ່ອາດຈະຍັງມີຢູ່.

ຈ. ເຈົ້າຂອງດິນກໍຄືຜູ້ນຳໃຊ້ເນື້ອທີ່ດິນ ຫຼື ຕົວແທນອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງຈະຕ້ອງ ລົງລາຍເຊັນ ແລະ ວັນທີ ເດືອນ ປີ ເພື່ອຮັບຮູ້ຢ່າງເປັນທາງການໃສ່ໃນໜັງສືຢັ້ງຢືນການມອບ-ຮັບ ວ່າເຂົາເຈົ້າໄດ້ຮັບຊາບການສະຫຼຸບລາຍງານຫຍໍ້ໂດຍສອດຄ່ອງກັບຂໍ້ກຳນົດທີ່ລະບຸໄວ້ໃນຂໍ້ທີ 7.7 ລຸ່ມນີ້.

## 7. ໜັງສືຢັ້ງຢືນການມອບ-ຮັບ

ໜັງສືຢັ້ງຢືນການມອບ-ຮັບຈະໄດ້ນຳໃຊ້ເພື່ອບັນທຶກການມອບ-ຮັບ ເນື້ອທີ່ດິນທີ່ໄດ້ອະນຸຍາດໃຫ້ນຳໃຊ້ຢ່າງເປັນທາງການ ໃຫ້ແກ່ເຈົ້າຂອງດິນກໍຄືຜູ້ນຳໃຊ້ດິນ ຫຼື ອຳນາດການປົກຄອງທ້ອງຖິ່ນກ່ຽວຂ້ອງ. ໜັງສືຢັ້ງຢືນການມອບ-ຮັບຕ້ອງການໃຫ້ປະກອບເຂົ້າກັບ **"ບົດລາຍງານການສຳຫຼວດຜົນສຳເລັດການເກັບກູ້".**

ໝາຍເຫດ: ໜັງສືຢັ້ງຢືນການມອບ-ຮັບບໍ່ມີຈຸດປະສົງທີ່ຈະເຮັດໃຫ້ມີການຊ້ຳຊ້ອນຂອງຂໍ້ມູນທີ່ບັນຈຸຢູ່ໃນ "ບົດລາຍງານການສຳຫຼວດຜົນສຳເລັດການເກັບກູ້". "ບົດລາຍງານການສຳຫຼວດຜົນສຳເລັດການເກັບກູ້" ລວມເອົາລາຍລະອຽດຂໍ້ມູນການສຳຫຼວດຂອງເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ ແລະ ບັນທຶກລູກລະເບີດທີ່ໄດ້ພົບໃນລະຫວ່າງການປະຕິບັດງານ.

ເນື່ອງຈາກໜັງສືຢັ້ງຢືນການມອບ-ຮັບມີຄວາມຕ້ອງໃຫ້ອ່ານ ແລະ ເຊັນໂດຍເຈົ້າໜ້າທີ່ຝ່າຍລາວ ເອກະສານນີ້ຕ້ອງຂຽນ ຫຼື ພິມເປັນພາສາລາວນຳ.

ຮູບແບບໜັງສືຢັ້ງຢືນການມອບ-ຮັບຍັງບໍ່ທັນມີແບບຮ່າງທີ່ເປັນມາດຕະຖານເທື່ອ. ຂໍ້ກຳນົດຕ່ຳສຸດສຳລັບຂໍ້ມູນທີ່ຈະກຳນົດໄວ້ໃນໜັງສືຢັ້ງຢືນການມອບ-ຮັບໄດ້ກຳນົດໄວ້ລຸ່ມນີ້.

## 7.1. ພະນັກງານຜູ້ທີ່ຈະເຂົ້າຮ່ວມພິທີມອບ-ຮັບຢູ່ເນື້ອທີ່ໆເກັບກູ້ລະເບີດແລ້ວ

ບຸກຄົນຜູ້ທີ່ຈະເຂົ້າຮ່ວມໃນພິທີມອບ-ຮັບຢູ່ສະໜາມຈະຕ້ອງເຮັດເປັນບັນຊີລາຍຊື່ ແລະ ຕຳແໜ່ງທາງລັດ ຖະການຢ່າງລະອຽດ.

## 7.2. ຂໍ້ມູນກ່ຽວກັບໜ້າວຽກ

ຂໍ້ມູນກ່ຽວກັບໜ້າວຽກລວມມີ:

ກ. ທີ່ຕັ້ງຂອງສະຖານທີ່ປະຕິບັດງານ ຊຶ່ງລວມມີ ຊື່ເມືອງ, ແຂວງ ແລະ ບ້ານ. ລະຫັດບ້ານອາດຈະໄດ້ກຳນົດໄວ້ ເພື່ອຊ່ວຍໃນການກຳນົດບ້ານ.

ຂ. ຈຸດປະສົງຂອງການນຳໃຊ້ເນື້ອທີ່ດິນ.

ຄ. ລາຍລະອຽດຂອງໜ່ວຍປະຕິບັດງານ, ລວມທັງຊື່ຂອງຜູ້ຊີ້ນຳການເກັບກູ້ຢູ່ສະໜາມດັ່ງກ່າວ.

ງ. ວັນທີ່ເລີ່ມຕົ້ນ ແລະ ວັນທີສຳເລັດການເກັບກູ້.

## 7.3. ຂໍ້ມູນການປະຕິບັດງານເກັບກູ້

ລາຍລະອຽດຂອງການຈັດຕັ້ງປະຕິບັດງານ ຕົວຢ່າງເຊັ່ນ: ການເກັບກູ້ລະເບີດໃນພື້ນທີ່ດິນທັງໝົດ ຫຼື ການສຳຫຼວດໃນເນື້ອທີ່ດິນທີ່ໄດ້ລະບຸໄວ້ແລ້ວ. ຄວາມເລິກ ແລະ ຄຸນນະພາບຂອງການເກັບກູ້ທີ່ບັນລຸໄດ້ ກໍໃຫ້ລະບຸດ້ວຍ.

ເມື່ອພື້ນທີ່ດິນໄດ້ອະນຸຍາດໃຫ້ນຳໃຊ້ໂດຍການສຳຫຼວດ ຕ້ອງແຈ້ງເຫດຜົນທີ່ຕັດສິນໃຈບໍ່ປະຕິບັດການເກັບກູ້ໃສ່ໃນໜັງສືຢັ້ງຢືນການມອບ-ຮັບພ້ອມ.

## 7.4. ຄວາມສ່ຽງສະເພາະຈາກສິ່ງເສດເຫຼືອ

ໃຫ້ຂຽນຂໍ້ຄວາມທີ່ສະແດງເຖິງຄວາມສ່ຽງອັນຕະລາຍຈາກສິ່ງເສດເຫຼືອທີ່ເປັນໄປໄດ້ ລະບຸໄວ້ໃນເອກະສານການມອບ-ຮັບນຳ. ຂໍ້ຄວາມນີ້ຄວນຈະບົ່ງບອກເຖິງຄວາມເປັນໄປໄດ້ທີ່ອາດຈະມີລູກລະເບີດທີ່ມີຂະໜາດນ້ອຍກວ່າ ລບຕ ທີ່ເປັນເປົ້າໝາຍຕ່ຳສຸດຂອງການເກັບກູ້ຢູ່ໃນພື້ນທີ່ນັ້ນ.

## 7.5. ຂອບເຂດຈຳກັດໃນການນຳໃຊ້ເນື້ອທີ່ດິນ

ໃນຂໍ້ຄວາມທີ່ກຳນົດໃນໜັງສືຢັ້ງຢືນການມອບ-ຮັບ ໃຫ້ລວມມີລາຍລະອຽດຂໍ້ຈຳກັດໃນການນຳໃຊ້ດິນ ຕົວຢ່າງເຊັ່ນ: ການຂຸດດິນເລິກເກີນກວ່າຄວາມເລິກຂອງການເກັບກູ້ ຫຼື ການນຳໃຊ້ເນື້ອທີ່ດິນທີ່ຢູ່ນອກບໍລິເວນທີ່ໄດ້ປັກໝາຍເຂດໄວ້.

### 7.6. ຄຳຢືນຢັນຢ່າງເປັນທາງການ

ເຈົ້າໜ້າທີ່ຂອງອົງການເກັບກູ້ລະເບີດທີ່ອະນຸຍາດໃຫ້ນຳໃຊ້ເນື້ອທີ່ດິນ ຈະຕ້ອງເຊັນ ແລະ ລົງວັນທີ ໃສ່ຄຳກ່າວຢືນຢັນກ່ຽວກັບຄວາມຕ້ອງການຂອງການເກັບກູ້ (ພື້ນທີ່ໆໄດ້ເກັບກູ້, ຄວາມເລິກ ແລະ ຄຸນນະພາບຂອງການເກັບກູ້) ທີ່ບັນລຸໄດ້ສຳລັບເນື້ອທີ່ດິນທີ່ໄດ້ອະນຸຍາດໃຫ້ນຳໃຊ້ ຢູ່ໃນໜັງສືຢັ້ງຢືນການມອບ-ຮັບ.

### 7.7. ການຮັບຮູ້ຂອງເຈົ້າຂອງດິນ, ຜູ້ນຳໃຊ້ດິນ ແລະ ອຳນາດການປົກຄອງກ່ຽວຂ້ອງ

ຈະຕ້ອງ ລົງລາຍເຊັນ ແລະ ວັນທີ; ເພື່ອຮັບຮູ້ຂໍ້ມູນຢູ່ໃນໜັງສືການມອບ-ຮັບ ເຈົ້າຂອງກໍຄືຜູ້ນຳໃຊ້ເນື້ອທີ່ ດິນ ຫຼື ອຳນາດການປົກຄອງກ່ຽວຂ້ອງ.

ກ. ເຄື່ອງໝາຍການສຳຫຼວດ ທີ່ບອກໃຫ້ຮູ້ເຂດແດນພື້ນທີ່ດິນທີ່ຈະຮັບອະນຸຍາດໃຫ້ນຳໃຊ້, ເຄື່ອງໝາຍຈຸດອ້າງອີງ (RP) ແລະ ເຄື່ອງໝາຍຈຸດມາດຕະຖານ (BM).

ຂ. ຮັບຟັງການລາຍງານຫຍໍ້ກ່ຽວກັບວຽກງານທີ່ໄດ້ປະຕິບັດ ແລະ ຄວາມຕ້ອງການຂອງການເກັບກູ້ທີ່ບັນລຸໄດ້.

ຄ. ຮັບຟັງການລາຍງານຫຍໍ້ກ່ຽວກັບຂໍ້ຈຳກັດໃດໜຶ່ງ ທີ່ຕິດພັນກັບການນຳໃຊ້ເນື້ອທີ່ດິນໃນອະນາຄົດ.

ງ. ຮັບຟັງການລາຍງານຫຍໍ້ກ່ຽວກັບຄວາມເປັນໄປໄດ້ທີ່ຈະມີຄວາມສ່ຽງຈາກຊິ້ນສ່ວນເສດເຫຼືອທີ່ພົວພັນກັບການນຳໃຊ້ເນື້ອທີ່ດິນ ແລະ ໃຫ້ຄຳແນະນຳວິທີປະຕິບັດ ແລະ ຈັດການກັບຄວາມສ່ຽງຈາກຊິ້ນສ່ວນສິ່ງເສດເຫຼືອ.

### 8. ການລາຍງານ

**"ບົດລາຍງານການສຳຫຼວດຜົນສຳເລັດການເກັບກູ້"** ແລະ ໜັງສືຢັ້ງຢືນການມອບ-ຮັບຈະໄດ້ປະກອບເຂົ້າກັບເອກະສານປະຕິບັດງານອື່ນແລ້ວສົ່ງໃຫ້ ຄຊກລ. ເອກະສານການປະຕິບັດງານທີ່ຈະສົ່ງ ຖ້າເປັນໄປໄດ້ໃຫ້ປະກອບມີ:

ກ. ເອກະສານຈັດສັນວຽກງານສະບັບຕົ້ນ. ເອກະສານນີ້ຄວນລະບຸຂໍ້ກຳນົດຄວາມຕ້ອງການຂອງການເກັບກູ້ ເຊັ່ນ: ພື້ນທີ່ດິນທີ່ຕ້ອງການໃຫ້ເກັບກູ້, ຄວາມເລິກ ແລະ ຄຸນນະພາບຂອງການເກັບກູ້.

ຂ. ການອອກເອກະສານໃຫ້ແກ່ເນື້ອທີ່ດິນທີ່ອະນຸຍາດໃຫ້ນຳໃຊ້ ເມື່ອດິນໄດ້ຖືກອະນຸຍາດແລ້ວແມ່ນໃຫ້ໃຊ້ການບໍລິຫານຄຸ້ມຄອງຄວາມສ່ຽງ ເບິ່ງ**ບົດທີ 6 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ ການສຳຫຼວດ.**

ຄ. ສຳເນົາບົດລາຍງານການສຳຫຼວດທີ່ໄດ້ປະຕິບັດກ່ອນການເກັບກູ້ລະເບີດ.

ງ. ສະຫຼຸບຫຍໍ້ກ່ຽວກັບວິທີການ ແລະ ອຸປະກອນທີ່ນຳໃຊ້ເພື່ອເກັບກູ້ ຫຼື ສຳຫຼວດພື້ນທີ່ດັ່ງກ່າວ.

ຈ. ບົດລາຍງານການກວດກາຄຸນນະພາບ (ພາຍໃນ ແລະ ພາຍນອກ) ທີ່ໄດ້ປະຕິບັດໃນລະຫວ່າງການປະຕິບັດງານ.

ສ. ລາຍລະອຽດຂອງເຫດການໃດໜຶ່ງ ທີ່ເກີດຂຶ້ນໃນລະຫວ່າງການປະຕິບັດງານ ແລະ ການອ້າງອີງຫາບົດລາຍງານເຫດການ.

ເມື່ອ ຄຊກລ ໄດ້ຮັບ **"ບົດລາຍງານການສຳຫຼວດຜົນສຳເລັດການເກັບກູ້"** ຈາກອົງການເກັບກູ້ລະເບີດ ກໍຖືວ່າ ຄຊກລ ໄດ້ຮັບຮອງເອົາເນື້ອທີ່ດິນທີ່ໄດ້ອະນຸຍາດໃຫ້ນຳໃຊ້ຢ່າງເປັນທາງການ.

ລາຍລະອຽດຂອງທຸກຂໍ້ມູນທີ່ກ່ຽວຂ້ອງຈະຕ້ອງເກັບຮັກສາໄວ້ຢູ່ ຄຊກລ ແລະ ເອົາເຂົ້າໃນຖານຂໍ້ມູນກ່ຽວກັບການເກັບກູ້ເນື້ອທີ່ ລບຕ ຂອງ ຄຊກລ.

## 9. ການມອບ-ຮັບພື້ນທີ່ດິນທີ່ໄດ້ໃຊ້ເປັນສະຖານທີ່ທຳລາຍລະເບີດຈຳນວນຫຼາຍ

ການມອບ-ຮັບພື້ນທີ່ດິນທີ່ໄດ້ນຳໃຊ້ເປັນສະຖານທີ່ທຳລາຍລະເບີດທີ່ມີຈຳນວນຫຼາຍ ແມ່ນອີງໃສ່ຄວາມຮຽກຮ້ອງຕ້ອງການຂອງເຈົ້າຂອງດິນ ຫຼື ອຳນາດການປົກຄອງທ້ອງທີ່ຄຸ້ມຄອງດິນຕອນນັ້ນ ສະຖານທີ່ໆໄດ້ນຳໃຊ້ເປັນບ່ອນທຳລາຍລະເບີດທີ່ມີຈຳນວນຫຼາຍອາດຕ້ອງການໃຫ້ມີການມອບ-ຮັບຢ່າງເປັນທາງການພາຍຫຼັງການນຳໃຊ້. ຖ້າມີການມອບ-ຮັບ ອີງການເກັບກູ້ລະເບີດທີ່ທຳລາຍລະເບີດຢູ່ບ່ອນນັ້ນ ຈະຕ້ອງປະຕິບັດດັ່ງລຸ່ມນີ້ ກ່ອນຈະໄດ້ມີການມອບ-ຮັບ:

ກ. ກວດກາພື້ນທີ່ດັ່ງກ່າວຢ່າງທົ່ວເຖິງຄັກແນ່ ເພື່ອຮັບປະກັນບໍ່ໃຫ້ມີລະເບີດຫຼົງເຫຼືອຢູ່ໃນພື້ນທີ່ດັ່ງກ່າວ.

ຂ. ບູລະນະພື້ນທີ່ດິນຄືນໃໝ່ ໂດຍໃຫ້ສອດຄ່ອງກັບຄວາມຕ້ອງການຂອງເຈົ້າຂອງດິນ ຫຼື ອຳນາດການປົກຄອງທີ່ຄຸ້ມຄອງດິນຕອນນັ້ນ.